*Journal of Science and Teacher Education (JLSTE), 1*(2), 593-604

# ຄຸນນະພາບຂອງການຮຽນ-ການສອນພາສາອັງກິດດ້ວຍວິທີການສອນແບບການປະຕິບັດຕົວຈິງ ສຳລັບນັກສຶກສາ ມະຫາວິທະຍາໄລສຸພານຸວົງ

*ຖາວອນ ປັນມະນີວົງ*, ຂັນທະລີ ສີດາວົງ, ຕຸລາກອນ ສຸລິຍາ, ສີປະເສີດ ປານພອງເພັດ, ໄພວັນ ວັດທະນາວົງ ແລະ ຄຳໃບ ຜົງພາຈັນ*

*ຄະນະສຶກສາສາດ, ມະຫາວິທະຍາໄລ ສຸພານຸວົງ, ສປປ ລາວ*

---

## ບົດຄັດຫຍໍ້

ການຄົ້ນຄວ້າຄັ້ງນີ້ຄະນະຜູ້ຄົ້ນຄວ້າໄດ້ສຶກສາ ຄຸນນະພາບຂອງການຮຽນ-ການສອນພາສາອັງກິດດ້ວຍວິທີການສອນແບບການປະຕິບັດຕົວຈິງສຳລັບນັກສຶກສາມະຫາວິທະຍາໄລສຸພານຸວົງ ເຊິ່ງມີຈຸດປະສົງເພື່ອ: 1) ປະເມີນຜົນການຮຽນວິຊາພາສາອັງກິດຫລັງຈາກການນຳໃຊ້ວິທີການສອນແບບການປະຕິບັດຕົວຈິງ, 2) ຫາປະສິດທິພາບຂອງການນາໃຊ້ວິທີການສອນແບບການປະຕິບັດຕົວຈິງ 3) ເພື່ອສຶກສາພຶດຕິກຳຄວາມໝັ້ນໃຈທີ່ສະແດງອອກຜ່ານຂະບວນການຈັດການຮຽນການສອນໃຊ້ວິທີການສອນແບບອີງໃສ່ການປະຕິບັດຕົວຈິງ 4) ເພື່ອສຶກສາຄວາມເພິງພໍໃຈຂອງນັກສຶກສາຕໍ່ການນຳໃຊ້ວິທີການສອນແບບການປະຕິບັດຕົວຈິງ. ກຸ່ມຕົວຢ່າງທີ່ໃຊ້ໃນການຄົ້ນຄວ້າແມ່ນນັກສຶກສາຊັ້ນປີທີ 3 ສາຂາຄູພາສາອັງກິດ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ໃນສົກສຶກສາ 2020-2021 ຈຳນວນ 20 ຄົນ. ໂດຍໃຊ້ຂະບວນການຈັດການຮຽນການສອນ 4 ຂັ້ນຕອນ ໄດ້ແກ່: 1: ການນຳເຂົ້າສູບົດຮຽນ, 2: ການວາງແຜນປະດິດສ້າງສິ່ງໃໝ່ ແລະ ເຝິກຊ້ອມການປະຕິບັດຕົວຈິງ, 3: ການປະຕິບັດ ຫຼື ສາທິດຕົວຈິງ ແລະ 4: ການວິເຄາະ ຫຼື ໃຫ້ຄາແນະນາ. ເຄື່ອງມືທີ່ໃຊ້ໃນການວິໄຈໄດ້ແກ່: ແຜນການສອນ, ແບບທົດສອບວັດຄວາມຮູ້ຄວາມເຂົ້າໃຈ, ແບບສັງເກດພຶດຕິກຳຄວາມໝັ້ນໃຈ, ແບບສອບຖາມຄວາມເພິງພໍໃຈ. ການວິເຄາະຂໍ້ມູນແມ່ນໃຊ້ຄ່າເປີເຊັນ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານ ແລະ ຄ່າທົດສອບ ທີ (t-test) ແບບ one-sample t-test. ຜົນການຄົ້ນຄວ້າພົບວ່າ ຜົນການຮຽນຫຼັງຈາກທີ່ໄດ້ຮຽນດ້ວຍວິທີການສອນແບບການປະຕິບັດຕົວຈິງ ສູງກວ່າເກນທີ່ກຳນົດໄວ້ ດ້ວຍລະດັບຄວາມສຳຄັນ 0.05. ປະສິດທິພາບຂອງການຈັດການຮຽນການສອນກໍຢູ່ໃນລະດັບສູງກວ່າເກນທີ່ກຳນົດໄວ້. ນັກສຶກສາມີຄວາມໝັ້ນໃຈທີ່ສະແດງອອກຜ່ານຂະບວນການຈັດການຮຽນການສອນໃຊ້ວິທີການສອນແບບອີງໃສ່ການປະຕິບັດຕົວຈິງໃນລະດັບຫຼາຍທີ່ສຸດ ແລະ ນັກສຶກສາກໍມີຄວາມເພິງພໍໃຈຕໍ່ກັບການຮຽນ-ການສອນວິຊາພາສາອັງກິດໂດຍການນຳໃຊ້ວິທີການສອນແບບການປະຕິບັດຕົວຈິງຄັ້ງນີ້ໃນລະດັບຫຼາຍທີ່ສຸດ.

***ຄຳສັບສຳຄັນ:*** *ການຈັດການຮຽນການສອນແບບປະຕິບັດຕົງຈິງ, ການປະເມີນຜົນການຮຽນ, ປະສິດທິພາບ, ຄວາມໝັ້ນໃຈ, ຄວາມເພິງພໍໃຈ*

---

**ຕິດຕໍ່ພົວພັນ: ຄຳໃບ ຜົງພາຈັນ; ເບີໂທ: 02029 302 126; ອີເມວ: tvathana620@gmail.com*

# The Quality of English Language Teaching and Learning through Task-Based Language Teaching Approach for Student Teachers of Souphanouvong University.

*Thavone Panmanivong*, Khanthaly Sidavong, Toulakone Souliya, Sipaseuth Panfongphet, Phaivanh Vathanavong and Khambay Phongphachan*

*Faculty of Education, Souphanouvong University, Lao PDR*

## Abstract

This study investigated the use of the *Task-Based Language Teaching* (TBLT) method to enhance the quality of English instruction and build students' confidence in diverse classrooms at the Faculty of Education, Souphanouvong University. The objectives were to: (1) evaluate student teachers' English learning performance after applying the TBLT method, (2) determine its instructional effectiveness, (3) examine student teachers' confidence and behavioral engagement during learning, and (4) assess their satisfaction with the method. The sample consisted of 20 third-year student teachers from the English Language Teaching Program during the 2020–2021 academic year. The teaching process followed four stages: introduction, planning and development, practice, and reflection. Research instruments included a teaching plan, performance evaluation, observation checklist, and satisfaction questionnaire. Data were analyzed using percentage, mean, standard deviation, and a one-sample $t$-test. Results indicated that students' post-instruction performance was significantly higher than the set criterion ($p < 0.05$). The instructional efficiency exceeded the 70/70 standard, student teachers exhibited greater confidence, and overall satisfaction was rated at the highest level. The findings suggest that TBLT is an effective approach for enhancing English learning, confidence, and engagement in higher education contexts.

***Keywords:*** *Task-Based Language Teaching, Learning Evaluation, Effectiveness, Self-confidence, Satisfaction.*
**Correspondence: Thavone Panmanivong; Tel: 02029 302 126; Email: tvathana620@gmail.com*

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ການສຶກສາໃນສະຕະວັດທີ XXI ໄດ້ສຸ່ມໃສ່ການນຳໃຊ້ວິທີການຮຽນການສອນທີ່ເອົານັກຮຽນເປັນໃຈກາງ ໂດຍເນັ້ນໜັກໃຫ້ນັກຮຽນ ໄດ້ຮຽນຮູ້ຈາກການປະຕິບັດ ແລະ ສຳພັດກັບເຫດການຕົວຈິງ ພ້ອມທັງເນັ້ນໃສ່ການນຳໃຊ້ເທັກໂນໂລຊີເຂົ້າມາເປັນເຄື່ອງມືທີ່ສຳຄັນໃນການຮຽນການສອນ ເພື່ອປັບປຸງການຮຽນການສອນໃຫ້ມີຄຸນນະພາບ ແລະ ປະສິດທິຜົນ (Pradhan, 2011). ການພັດທະນາການຮຽນຮູ້ແບບມີປະສິດທິພາບແມ່ນແມ່ນເນັ້ນໃສ່ການສ້າງໃຫ້ນັກສຶກສາຮູ້ນຳໃຊ້ສິ່ງທີ່ຮຽນມາໄປໃຊ້ໃນໜ້າວຽກ, ໃນຊີວິດປະຈຳວັນ ແລະ ປະດິດສິ່ງໃຫມ່ເພື່ອຮັບໃຊ້ສັງຄົມ .

ເພື່ອເຮັດໃຫ້ຊັບພະຍາກອນມະນຸດມີຄຸນນະພາບ ຄຽງຄູ່ກັບການພັດທະນາເສດຖະກິດ-ສັງຄົມຂອງຊາດ, ການສຶກສາຈຶ່ງເປັນປັດໃຈພື້ນຖານໃນການພັດທະນາຊັບພະຍາກອນມະນຸດ. ດັ່ງນັ້ນ, ພັກຈຶ່ງໄດ້ກຳນົດແນວທາງໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດໂດຍຖືເອົາວຽກງານການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດເປັນປັດໃຈສຳຄັນໃນການພັດທະນາເສດຖະກິດ-ສັງຄົມ (ເອກະສານກອງປະຊຸມໃຫຍ່ຄັ້ງທີ IX ພັກປະຊາ ຊົນປະຕິວັດລາວ 2011 ໜ້າ 78). ກະຊວງສຶກສາທິການໄດ້ປັບປຸງຫຼັກສູດ ເພື່ອສົ່ງເສີມໃຫ້ນັກສຶກສາມີຫົວຄິດປະດິດສ້າງ ສາມາດນຳໃຊ້ບົດຮຽນທີ່ຮຽນມາໄປປະຕິບັດຕົວຈິງ ແລະ ເສີມຂະຫຍາຍ ສອດຄ່ອງກັບຄວາມເປັນຈິງຂອງປະເທດ, ຂອງທ້ອງຖິ່ນ ແລະ ສອດຄ່ອງກັບຄວາມເປັນສາກົນ (ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII ປີ 2016-2020) ເພື່ອເປັນການສົ່ງ ເສີມຫົວຄິດປະດິດສ້າງ ແລະ ຄວາມສາມາດນຳໃຊ້ຄວາມຮູ້ໃນພາກປະຕິບັດຕົວຈິງ ນັ້ນກະຊວງສຶກສາ ແລະ ກິລາຈຶ່ງໄດ້ສົ່ງເສີມວິທີການຮຽນໂດຍເອົານັກຮຽນເປັນໃຈກາງ ແລະ ເນັ້ນການປະຕິບັດຕົວຈິງມາຕັ້ງແຕ່ຊຸມປີ 1990S (ວິໄສທັດໃນການປະຕິຮູບການສຶກສາ 1994).

ການຈັດການຮຽນ-ການສອນໂດຍນຳໃຊ້ວິທີການສອນທີ່ເນັ້ນໃຫ້ນັກສຶກສາໄດ້ເຝິກ ແລະ ປະຕິບັດຕົວຈິງ ທັງໃນ ແລະ ນອກຫ້ອງຮຽນ ໂດຍນຳໃຊ້ເທັກໂນໂລຊີເປັນເຄື່ອງມື ມີຄວາມສຳຄັນຫຼາຍ ຍ້ອນຊ່ວຍໃຫ້ກິດຈະກຳໃນການຮຽນ-ການສອນມີຄວາມສ້າງສັນ ແລະ ວິທີຄິດໃນການແກ້ໄຂບັນຫາຂອງນັກຮຽນເກີດຂຶ້ນພ້ອມໆກັນ, ການຈັດການຮຽນແບບດັ່ງກ່າວ ມີລັກສະນະສຳຄັນຄືສົ່ງເສີມໃຫ້ນັກສຶກສາຄິດຢ່າງມີອິດສະຫະ, ມີຄວາມກະຕືລືລົ້ນໃນການຮຽນທັງໃນ ແລະ ນອກຫ້ອງຮຽນ, ສາມາດແກ້ໄຂບັນຫາດ້ວຍຄວາມຫຼາກຫຼາຍ ແລະ ຜູ້ສອນຄວນຖືເອົາຈຸດສຳຄັນນີ້ໃນການອອກແບບວິທີສິດສອນ ແລະ ສ້າງສື່ການສອນໃຫ້ເໝາະກັບວິຊາທີ່ສອນ ແລະ ຄວາມຕ້ອງການຂອງນັກສຶກສາຢ່າງມີປະສິດທິພາບ.

ການສອນທີ່ເຮັດໃຫ້ນັກສຶກສາເກີດການຮຽນຮູ້ຄື ໃຫ້ນັກສຶກສາໄດ້ລົງມືປະຕິບັດ ແລະ ສາທິດຕົວຈິງ.  ເຊິ່ງປະຈຸບັນການນຳໃຊ້ວິທີການສອນແບບການປະຕິບັດຕົວຈິງ (Task-based Language Teaching: TBLT) ໂດຍນຳໃຊ້ເຕັກໂນໂລຢີຊ່ວຍ ແມ່ນມີບົດບາດສຳຄັນໃນການເຮັດໃຫ້ການພັດທະນາການຮຽນຮູ້ນີ້ເກີດຂຶ້ນ ແລະ ສາມາດກະຕຸ້ນໃຫ້ທັງຄູອາຈານ ແລະ ນັກສຶກສາມີສ່ວນຮ່ວມ ເພື່ອສົ່ງເສີມການຮຽນຮູ້ຮ່ວມກັນ, ການນຳໃຊ້ຄວາມຮູ້ໃນສະພາບແວດລ້ອມການຮຽນຂອງນັກສຶກສາຢ່າງມີນະວັດຕະກຳ ແລະ ແທດເໝາະກັບສະພາບການໃນປະຈຸບັນ (Ellis, 2000).

ໃນຫຼາຍຂົງເຂດຂອງການສຶກສາໃນທົ່ວໂລກ, ໂດຍສະເພາະການຮຽນການສອນພາສາອັງກິດ, ກຳລັງໄດ້ຮັບການພັດທະນາໃນດ້ານວິທີການສິດສອນ ແລະ ການຮຽນຮູ້ ຄວນເນັ້ນໃຫ້ນັກສຶກສາໄດສິນທະນາ ແລະ ໃຫ້ມີການສາທິດຕົວຈິງ ຢ່າງມີຫົວຄິດປະດິດສ້າງ ແລະ ການຮ່ວມມື. ໃນຍຸກທີ່ທັນສະໃໝ່ນີ້, ນັກຄົ້ນຄວ້າຫຼາຍທ່ານໄດ້ໃຫ້ທັດສະນະຄະຕິວ່າ ການສອນພາສາອັງກິດຄວນເນັ້ນໃຫ້ນັກສຶກສາເປັນໃຈກາງ, ໄດ້ສາທິດ ແລະ ປະຕິບັດຕົວຈິງ ແລະ ນຳໃຊ້ເທັກໂນໂລຊີຊ່ວຍເປັນສື່ໃນການສົ່ງເສີມການຮຽນການສອນໃຫ້ມີປະສິດທິພາບ. ພ້ອມນັ້ນນັກສຶກສາຕ້ອງເປັນຜູ້ທີ່ມີຄວາມໝັ້ນໃຈ, ມີແຮງບັນດານໃຈ ແລະ ມີເປົ້າໝາຍຂອງການຮຽນ.

ການສອນທີ່ເນັ້ນໃຫ້ນັກຮຽນໄດ້ຮຽນຮູ້, ສາທິດໃນພາກປະຕິບັດຕົວຈິງການນຳໃຊ້ວິທີການສອນແບບການປະຕິບັດຕົວຈິງ ແມ່ນວິທີການສິດສອນທີ່ປະສົບຜົນສຳເລັດ ໂດຍສະເພາະແມ່ນນຳໃຊ້ໃນການສອນວິຊາພາສາອັງກິດໃນຂົງເຂດທີ່ໃຊ້ພາສາອັງກິດເປັນພາສາຕ່າງປະເທດ. ວິທີການນີ້ແມ່ນໄດ້ຮັບການຍອມຮັບຈາກຜູ້ຊ່ຽວຊານດ້ານການສຶກສາ (Erickson-Betz, 2018). ພ້ອມກັນນັ້ນ, ວິທີການສອນແບບການປະຕິບັດຕົວຈິງກຳລັງເປັນທີ່ຍອມຮັບວ່າເປັນວິທີການສອນທີ່ທັນສະໄໝ ເຊິ່ງສາມາດນຳໃຊ້ເພື່ອສົ່ງເສີມການຮຽນຮູ້ແບບເອກະລາດ, ການຮຽນຮູ້ຕະຫຼອດຊີວິດ, ການຮຽນແບບການພົວພັນກັບຊີວິດຈິງ, ການຮຽນຮູ້ໂດຍການເຮັດ, ການຮຽນຮູ້ທີ່ມີນະວັດຕະກຳ, ການສົ່ງເສີມຄວາມຄິດ, ການຮ່ວມມື, ການສ້າງຄາມໝັ້ນໃຈ ແລະ ຄວາມກະຕືລືລົ້ນຂອງນັກສຶກສາ.

ຜົນການວິໄຈກ່ອນໜ້ານີ້ໄດ້ສະແດງໃຫ້ເຫັນວ່າ ຜົນຂອງການຮຽນພາສາອັງກິດຢູ່ໃນປະເທດລາວແມ່ນຍັງຢູ່ໃນລະດັບທີ່ບໍ່ໜ້າເພິ່ງພໍໃຈ  ຍ້ອນຫຼາຍສາເຫດ ເຊັ່ນວ່າ: ຍ້ອນຜູ້ສອນໃຊແຕ່ການສອນແບບເດີມ ໆ ສ່ວນຫຼາຍໃນການສອນພາສາອັງກິດແມ່ນນຳໃຊ້ວິທີການສອນແບບ 3 Ps (Presentation, Practice and Product) ເຊິ່ງເປັນວິທີທີ່ຫຼ້າສະໃຫມ່, ຍ້ອນແນວນັ້ນຈິ່ງເຮັດໃຫ້ການຮຽນການສອນໜ້າເບື່ອ, ຜູ້ຮຽນຂາດແຮງຈູງໃຈໃນການຮຽນ, ໂດຍສະເພາະແມ່ນນັກຮຽນທີ່ກຳລັງສຶກສາຢູ່ລະດັບວິທະຍາໄລ ແລະ ມະຫາວິທະຍາໄລ ໃນ ສ ປ ປ ລາວ (Souriyavongsa, Rany, Abidin, & Mei, 2013; Xaypanya, Ismail, & Low, 2017). ການທີ່ຈະປະສົບຜົນສຳເລັດໃນການຮຽນພາສາອັງກິດ ແມ່ນຜູ້ສອນຕ້ອງໄດ້ໃຊ້ການສອນຫຼາກຫຼາຍວິທີ, ສ້າງໃຫ້ນັກຮຽນມີຄວາມໝັ້ນໃຈ, ມີແຮງຈູງໃຈ ແລະ ຄວາມມຸ່ງໝັ້ນສູງ ພ້ອມທັງມີທັດສະນະຄະຕິໃນທາງບວກຕໍ່ການຮຽນນັ້ນ (Erickson-Betz, 2018).

ຈາກບັນຫາດັ່ງກ່າວ, ກຸ່ມຜູ້ຄົ້ນຄວ້າຈິ່ງ ມີຄວາມສົນໃຈ ແລະ ເຫັນຄວາມສຳຄັນໃນການນຳໃຊ້ວິທີສິດ ສອນແບບອີງໃສ່ການປະຕິບັດຕົວຈິງ, ເພາະວິທີການສອນນີ້ອາດຊ່ວຍໃຫ້ນັກສຶກສາ ຮຽນພາສາອັງກິດໄດ້ດີຂຶ້ນ ພ້ອມທັງເຮັດໃຫ້ນັກສຶກສາ ໄດ້ຄົ້ນຄິດ ແລະ ອາດເປັນການສ້າງໃຫ້ນັກສຶກສາມີຄວາມໝັ້ນໃຈ ແລະ ມີຄວາມກະຕືລືລົ້ນໃນການຮຽນຫຼາຍຂຶ້ນ. ການຮຽນວິທີນີ້ ແມ່ນໃຫ້ນັກສຶກສາໄດ້ຮຽນຮູ້ ຄວາມຮູ້ຂອງວິຊາທີ່ຮຽນ ເຊັ່ນ: ຄຳສັບ, ສຳນວນ, ໄວຍາກອນ, ການອອກສຽງ ແລະ ອື່ນ ໆ ໃນຫ້ອງຮຽນ. ຫຼັງຈາກນັ້ນຜູ້ສອນມອບກິດຈະກຳໃຫ້ນັກຮຽນໄປເຝິກຊ້ອມ ແລະ ປະຕິບັດຕົວຈິງ ເປັນຄູ່ ຫຼື ເປັນກຸ່ມ. ຫຼັງຈາກນັ້ນໃຫ້ກຸ່ມນັກສຶກສາ ໄດ້ປະຕິບັດ ແລະ ສາທິດຕົວຈິງ. ໃນຊ່ວງທີ່ສາທິດຕົວຈິງນັ້ນ, ນັກສຶກສາຕ້ອງໄດ້ບັນທຶກເປັນ ວີດີໂອ ແລ້ວສົ່ງໃຫ້ຜູ້ສອນເບິ່ງເພື່ອການໃຫ້ຄຳຄິດເຫັນ, ຕຳນິຕິຊົມ ແລະ ພັດທະນາໃນຄັ້ງຕໍ່ໄປ.

*1.2. ຄຳຖາມຂອງການຄົ້ນຄ້ວາ*

1. ຜົນການຮຽນວິຊາພາສາອັງກິດຫລັງຈາກການນາໃຊ້ວິທີການສອນແບບການປະຕິບັດຕົວຈິງ ເປັນແນວໃດ?

2. ປະສິດທິພາບຂອງການນາໃຊ້ວິທີການສອນແບບການປະຕິບັດຕົວຈິງ ເປັນແນວໃດ?

3. ນັກສຶກສາມີພຶດຕິກຳຄວາມໝັ້ນໃຈທີ່ສະແດງອອກຜ່ານຂະບວນການຈັດການຮຽນການສອນໃຊ້ວິທີການສອນແບບອີງໃສ່ການປະຕິບັດຕົວຈິງເປັນຄືແນວໃດ?

4. ນັກສຶກສາມີຄວາມເພິງພໍໃຈຕໍ່ການນາໃຊ້ວິທີການສອນແບບການປະຕິບັດຕົວຈິງ ຢູ່ໃນລະດັບໃດ?

*1.3. ຈຸດປະສົງຂອງການຄົ້ນຄ້ວາ*

1. ເພື່ອປະເມີນຜົນການຮຽນວິຊາພາສາອັງກິດ ຫລັງຈາກການນຳໃຊ້ວິທີການສອນແບບການປະຕິບັດຕົວຈິງ.

2. ເພື່ອຫາປະສິດທິພາບຂອງການນາໃຊ້ວິທີການສອນແບບການປະຕິບັດຕົວຈິງ.

3. ເພື່ອສຶກສາພຶດຕິກຳຄວາມໝັ້ນໃຈທີ່ສະແດງອອກຜ່ານຂະບວນການຈັດການຮຽນການສອນໃຊ້ວິທີການສອນແບບອີງໃສ່ການປະຕິບັດຕົວຈິງ.

4. ເພື່ອສຶກສາຄວາມເພິງພໍໃຈຂອງນັກສຶກສາຕໍ່ການນາໃຊ້ວິທີການສອນແບບການປະຕິບັດຕົວຈິງ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ຜູ້ຄົ້ນຄວ້າໄດ້ສຶກສາບົດຄົ້ນຄວ້າທີ່ກ່ຽວຂ້ອງ ເພື່ອນຳມາເປັນແນວທາງໃນການສຶກສາ ດັ່ງລາຍລະອຽດດັ່ງນີ້:

Nahavandi & Mukundan (2012) ໄດ້ການສຶກສາໂດຍການສັງເກດກ່ຽວກັບການນຳໃຊ້ກວິທີການສອນພາສາອັງກິດແບບອີງໃສ່ການປະຕິບັດຕົວຈິງ (Task-Based Language

Teaching) ຢູ່ມະຫາວິທະຍາໄລ Islamic Azad ຂອງ Tabriz, ປະເທດອີຣານ. ຜົນການຄົ້ນຄວ້າສະແດງໃຫ້ເຫັນວ່າເຖິງວ່າວິທີການສອນນີ້ແມ່ນໄດ້ຖືກນຳໃຊ້ໃນຫ້ອງຮຽນພາສາຕ່າງປະເທດ ແລະ ໄດ້ຮັບຄວາມຮ່ວມມືຈາກຜູ້ຮຽນ ຜູ້ຮຽນມີຄວາມກະຕືລືລົ້ນຕໍ່ການສອນ ແຕ່ເຖິງຢ່າງໃດກໍ່ຕາມ ຄູສອນໄດ້ໃຫ້ຄຳເຫັນວ່າ ໄດ້ຮັບຄວາມເຂົ້າໃຈທີ່ບໍ່ຈະແຈ້ງກ່ຽວກັບການນຳໃຊ້ວິທີການທີ່ອີງແບບ TBLT ໃນຊັ້ນຮຽນຂອງພວກເຂົາ. ຜົນຂອງການສຶກສາອາດຈະມີຜົນສະທ້ອນຂອງຄູໃນການສອນແລະການພັດທະນາຫຼັກສູດ.

Ooyoung Pyun (2013) ໄດ້ສຶກສາຜົນຂອງການສຶກສາການສິດສອນພາສາອັງກິດ ຢູ່ປະເທດເກົາຫຼີໃຕ້. ຜົນການຄົ້ນຄວ້າພົບວ່າ: ວິທີການສອນທີ່ອີງໃສ່ແບບ TBLTໄດ້ຊີ້ໃຫ້ເຫັນວ່າທັດສະນະຂອງນັກຮຽນຕໍ່ TBLT ແມ່ນນັກຮຽນມີຄວາມເພິ່ງພໍໃຈ, ມີແຮງຈູງໃຈ ແລະ ມີການພັດທະນາໃນທາງບວກ.

ໃນການວິໄຈສົມທຽບລະຫວ່າງວິທີສອນແບບ TBLT ແລະ Task-Supported Language Instruction ກັບນັກຮຽນທີ່ຮຽນພາສາອັງກິດ ຈຳນວນ 5 ກຸ່ມ ໃນລະດັບມັດທະຍົມຢູ່ທີ່ ສປປ ຈີນ. ຜົນການຄົ້ນຄວ້າພົບວ່າ: ນັກຮຽນມີຄວາມເພິ່ງພໍໃຈ ແລະ ມີຄວາມກະຕືລືລົ້ນຕໍ່ການສອນແບບ TBLT ແລະ ຜົນຂອງການທົດລອງເຫັນວ່າການຮຽນຂອງນັກຮຽນແມ່ນພັດທະນາຂຶ້ນຢ່າໜ້າເພິ່ງພໍໃຈ (Li, Ellis & Zhu, 2016).

Celik (2017) ໄດ້ຄົ້ນຄວ້າທີ່ມະຫາວິທະຍາໄລ ອີຊິກ (Ishik University) ປະເທດອີລັກ ຜົນການຄົ້ນຄວ້າພົບວ່າ: ການຮຽນການສອນທີ່ອີງໃສ່ແບບການປະຕິບັດຈິງ ຫຼື TBLT ແມ່ນເປັນວິທີທີ່ເນັ້ນຫນັກໃຫ້ຜູ້ຮຽນໄດ້ເສີມສ້າງທັກສະການເວົ້າ ແລະ ຄວາມໝັ້ນໃຈ ໂດຍການຮຽນຈາກການປະຕິບັດ ຫຼື ສາທິດຕົວຈິງ. ຜູ້ຮຽນມີການພັດທະນາໄປໃນທາງບວກ. ວິທີການສອນນີ້ຖືເປັນວິທີການສອນທີ່ສຳຄັນ ແລະ ສາມາດເປັນແນວທາງໃຫ້ຄູສອນພາສາສາມາດນຳໄປປັບໃຊ້ໄດ້.

ໃນປະເທດໄທ ສິລິນັນ ເຊື້ອໄທສົງ (2017) ໄດ້ສຶກສາການຈັດການຮຽນຮູ້ແບບເນັ້ນງານປະຕິບັດ ເພື່ອເສີມສ້າງທັກສະການເວົ້າພາສາອັງກິດສຳລັບນັກສຶກສາຊັ້ນປີທີ່ 1 ທີ່ມະຫາວິທະຍາໄລສີລະປະກອນ ຈຳນວນ 25 ຄົນ. ດ້ວຍວິທີການຄັດເລືອກແບບເຈາະຈົງ ແລະ ໃຊ້ເຄື່ອງມືປະກອບດ້ວຍ: ແຜນການຈັດການຮຽນການສອນທີ່ເນັ້ນການປະຕິບັດງານ ຈຳນວນ 10 ແຜນ, ແບບທົດສອບວັດທັກສະການເວົ້າພາສາອັງກິດ ແລະ ແບບສອບຖາມຄວາມຄິດເຫັນຂອງນັກສຶກສາຕໍ່ການຈັດການຮຽນການສອນແບບເນັ້ນການປະຕິບັດງານ ແລະ ດ້ວຍການສຳພາດນັກສຶກສາກ່ຽວກັບການຈັດການຮຽນການສອນແບບເນັ້ນການປະຕິບັດງານ ເຊິ່ງຜົນການຄົ້ນຄວ້າພົບວ່າ: ທັກສະການເວົ້າພາສາອັງກິດຫຼັງຮຽນດ້ວຍກິດຈະກຳການຮຽນຮູ້ແບບເນັ້ນການປະຕິບັດງານ ສູງກວ່າກ່ອນຮຽນ ແລະ ນັກຮຽນມີຄວາມຄິດເຫັນຕໍ່ກິດຈະກຳການຮຽນການສອນແບບເນັ້ນການປະຕິບັດງານ ຢູ່ໃນລະດັບດີ.

ນັດຖະການ ອີງໄຊຍະພູມ (2020) ໄດ້ການພັດທະນາທັກສະການຟັງ ແລະ ການເວົ້າພາສາອັງກິດໂດຍໃຊ້ກິດຈະກຳການຮຽນຮູ້ແບບນັ້ນພາລະງານ (Task Base Learning Activity) ສຳລັບນັກຮຽນຊັ້ນປະຖົມສຶກສາປີທີ່ 4 ຈຳນວນ 20 ຄົນ. ຜົນການຄົ້ນຄວ້າພົບວ່າ: ທັກສະການຟັງ ແລະ ການເວົ້າພາສາອັງກິດຫຼັງຮຽນດ້ວຍກິດຈະກຳການຮຽນຮູ້ແບບເນັ້ນພາລະງານສູງກວ່າກ່ອນຮຽນ ແລະ ນັກຮຽນມີຄວາມເພິ່ງພໍໃຈຕໍ່ກິດຈະກຳການຮຽນການສອນແບບເນັ້ນພາລະງານຢູ່ໃນລະດັບຫຼາຍທີ່ສຸດ.

ຈາກການສຶກສາບົດຄົ້ນຄວ້າທີ່ກ່ຽວຂ້ອງສະແດງໃຫ້ເຫັນໄດ້ວ່າ: ວິທີການສອນແບບການປະຕິບັດຕົວຈິງ ສ່ວນຫຼາຍແມ່ນສາມາດເຮັດໃຫ້ຜູ້ຮຽນມີຄວາມຮູ້, ຄວາມສາມາດ, ສ້າງພຶດຕິກຳຄວາມໝັ້ນໃຈໃນການຮຽນພາສາອັງກິດໄດ້ເປັນຢ່າງດີ. ສະນັ້ນ, ຜູ້ຄົ້ນຄວ້າສາມາດສະຫຼຸບມາເປັນຂອບຄວາມຄິດທີ່ໃຊ້ໃນການສຶກສາຄົ້ນຄວ້າຄັ້ງນີ້ດັ່ງນີ້:

ຂັ້ນຕອນວິທີການສອນແບບການປະຕິບັດຕົວຈິງ, ປະກອບດ້ວຍ 4 ຂັ້ນຕອນ ໄດ້ແກ່:

1) ຂັ້ນຕອນນາເຂົ້າສູ່ບົດຮຽນ ແລະ ການນາສະເຫນີບົດຮຽນ

2) ຂັ້ນຕອນການເຝິກຊ້ອມ

3) ຂັ້ນຕອນການປະດິດສ້າງສິ່ງໃຫມ່ ແລະ ປະຕິບັດຕົວຈິງ, ການປະຕິບັດຕົວຈິງແມ່ນຖາຍເປັນວິດີໂອ ແລ້ວນຳວິດີໂອນັ້ນມາໃຫ້ຄະແນນ ແລະ ແນະນຳ.

4) ຂັ້ນຕອນການປະເມີນ ແລະ ໃຫ້ຄາແນະນາ.

ສະແດງດັ່ງແຜນວາດລຸ່ມນີ້:




ຮູບທີ່ 1 ຂັ້ນຕອນວິທີການສອນແບບການປະຕິບັດຕົວຈິງ
(ທີ່ມາ : Celik, 2017)




ຮູບທີ່ 2 ຂອບຄວາມຄິດໃນການສຶກສາ
(ທີ່ມາ: ຜູ້ຄົ້ນຄວ້າສ້າງຂຶ້ນເອງ)

## 3. ວິທີດຳເນີນການຄົ້ນຄວ້າ

ໃນການຄົ້ນຄວ້າຄັ້ງນີ້ນຳໃຊ້ລະບຽບການຄົ້ນຄວ້າແບບສຳຫຼວດ (Survey research methodology) ດ້ວຍຂໍ້ມູນທາງດ້ານປະລິມານ (Phanakij and Nillapun, 2016). ໂດຍໃຊ້ແບບສອບຖາມເປັນເຄື່ອງມືຫຼັກໃນການຄົ້ນຄວ້າ.

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ປະຊາກອນແມ່ນນັກສຶກສາຄູພາສາອັງກິດໃນຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ໃນສົກສຶກສາ 2020-2021 ຈຳນວນ 4 ຊັ້ນຮຽນ ຄື: ປີທີ 1, 2, 3 ແລະ 4 ເຊິ່ງແຕ່ລະຊັ້ນຮຽນມີ 1 ຫ້ອງ, ລວມເປັນ 4 ຫ້ອງ ນັກສຶກສາລວມທັງໝົດ 82 ຄົນ.

ກຸ່ມຕົວຢ່າງທີ່ໃຊ້ໃນການຄົ້ນຄ້ວາຄັ້ງນີ້ເປັນການເລືອກແບບງ່າຍດາຍ (Simple random sampling) (Srisa-at, 2010; Vathanavong, 2024) ດ້ວຍວິທີການກຳນົດວ່າເປັນນັກສຶກສາຄູພາສາອັງກິດຊັ້ນປີທີ 3 ສົກຮຽນ 2020-2021 ຂອງຄະນະສຶກສາສາດ ມະຫາວິທະຍາ ໄລສຸພານຸວົງ ຜູ້ທີ່ສະໝັກໃຈເຂົ້າຮ່ວມການຄົ້ນຄວ້າ ເຊິ່ງລວມມີທັງໝົດ 20 ຄົນ.

*3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ເຄື່ອງມືໃນການຄົ້ນຄວ້າຄັ້ງນີ້ໄດ້ແບ່ງອອກເປັນ 5 ປະເພດໄດ້ແກ່:

3.2.1 ແຜນການສອນ

1. ແຜນການສອນແບບອີງໃສ່ການປະຕິບັດຕົວຈິງ ມີແຜນການສອນ 5 ບົດ ໂດຍອີງໃສເຕັກນິກ ແລະ ວິທີການ ສອນພາສາອັງກິດແບບອີງໃສ່ການປະຕິບັດຕົວຈິງ. ການສິດສອນຢູ່ໃນຫ້ອງແມ່ນ 10 ຄັ້ງ ແລະ ນອກຫ້ອງຮຽນແມ່ນ 5 ຄັ້ງ, ແຕ່ລະຄັ້ງໃຊ້ເວລາປະມານ 90 ນາທີ. ການຂຶ້ນຫ້ອງແມ່ນ 1.5 ຄັ້ງຕໍ່ອາທິດ (ຂຶ້ນ 1 ຄັ້ງ ແລະ ອີກ 1 ຄັ້ງແມ່ນ ຂຶ້ນອາທິດຄີກ/ຄູ່). ເຊິ່ງເລີ່ມຕັ້ງແຕ່ ເດືອນຕຸລາ 2020 ເຖິງເດືອນ ທັນວາ 2020.

2. ແຜນການສອນແຕ່ລະບົດ ແມ່ນປະກອບມີ 4 ຂັ້ນຕອນຄື:

1) ຂັ້ນຕອນນຳເຂົ້າສູ່ບົດຮຽນ ແລະ ການນຳສະເໜີບົດຮຽນ

2) ຂັ້ນຕອນການເຝິກຊ້ອມ

3) ຂັ້ນຕອນການປະດິດສ້າງສິ່ງໃໝ່ ແລະ ປະຕິບັດຕົວຈິງ, ການປະຕິບັດຕົວຈິງແມ່ນຖ່າຍເປັນວິດີໂອ ແລ້ວນຳວິດີໂອນັ້ນມາໃຫ້ຄະແນນ ແລະ ແນະນຳ.

4) ຂັ້ນຕອນການປະເມີນ ແລະ ໃຫ້ຄຳແນະນຳ.

3. ຜູ້ຄົ້ນຄວ້າສ້າງຈາກການສຶກສາໂຄງສ້າງລາຍວິຊາ, ກິດຈະກຳການຮຽນການສອນວິຊາພາສາອັງກິດຂອງຄະນະສຶກສາສາດມະຫາວິທະຍາໄລສຸພານຸວົງ ເພື່ອສ້າງຄວາມເຂົ້າໃຈກ່ຽວກັບຈຸດປະສົງ, ເນື້ອໃນບົດສອນ, ຫຼັກການສອນ ເພື່ອເປັນແນວທາງໃນການຂຽນແຜນການສອນ.

4. ວິເຄາະເນື້ອໃນວິຊາໃຫ້ເໝາະສົມກັບເວລາໃນການຈັດກິດຈະກຳການຮຽນການສອນທີ່ເນັ້ນການຮຽນແບບອີງໃສ່ການປະຕິບັດຕົວຈິງ.

5. ຂຽນເປັນບົດສອນ ແລະ ປັບປຸງເນື້ອໃນເພື່ອໃຫ້ສາມາດເປັນໄປຕາມຈຸດປະສົງຂອງການຮຽນການສອນ.

6. ນຳແຜນການສອນແຕ່ລະແຜນສະເໜີຕໍ່ຜູ້ຊ່ຽວຊານຈຳນວນ 3 ທ່ານ ເພື່ອກວດສອບຄຸນນະພາບດ້ານດັດສະນີຄວາມສອດຄ່ອງ (Index of Item Objective Congruence: IOC) ເຊິ່ງໄດ້ຄ່າດັດສະນີຄວາມສອດຄ່ອງຕັ້ງແຕ່ 0.6 ຂຶ້ນໄປທຸກດ້ານ

7. ນຳແຜນການສອນທີ່ໄດ້ປັບປຸງແລ້ວ ໄປໃຊ້ໃນການຈັດການຮຽນການສອນຈິງໃນຫ້ອງຮຽນ.

*3.2.2 ແບບກວດສອບການປະຕິບັດຕົວຈິງ*

1. ເປັນເຄື່ອງມືທີ່ໃຊ້ໃນການກວດໃຫ້ຄະແນນການປະຕິບັດຕົວຈິງໂດຍນັກສຶກສາໂດຍຜ່ານວິດີໂອທີ່ບັນທຶກເພື່ອປະເມີນທັກສະດ້ານການເວົ້າ ແລະ ການຟັງ

2. ສຶກສາເນື້ອໃນຈາກຕຳລາ ແບບຮຽນ ແລະ ສ້າງເປັນແບບທົດສອບດ້ານທັກສະຜ່ານວິດີໂອ ແລະ ຈາກເອກະສານຕ່າງ ໆ ທີ່ກ່ຽວຂ້ອງ.

3. ວິເຄາະເນື້ອໃນ ແລະ ຈຸດປະສົງການຮຽນການສອນ

4. ສ້າງເປັນແບບບັນທຶກການໃຫ້ຄະແນນ ເພື່ອກວດກິດຈະກຳ 4 ກິດຈະກຳ ແລ້ວນຳໄປໃຫ້ຜູ້ຊ່ຽວຊານ 3 ທ່ານໃນການກວດສອບຄວາມທ່ຽງຕົງດ້ານເນື້ອໃນ (Content Validity) ແລະ ດັດສະນີຄວາມສອດຄ່ອງ ເຊິ່ງຄ່າທີ່ຄຳນວນໄດ້ຢູ່ລະຫວ່າງ 0.67 ຫາ 1.00.

*3.2.3 ແບບທົດສອບ*

1. ເປັນແບບທົດສອບຄວາມຮູ້ຄວາມເຂົ້າໃຈຂອງນັກສຶກສາ ເຊິ່ງສ້າງເປັນແບບປາລະໄນ ທີ່ມີ ຕົວເລືອກ 4 ຕົວເລືອກ.

2. ສຶກສາເນື້ອໃນຈາກຕໍາລາ ແບບຮຽນ ແລະ ສ້າງເປັນແບບທົດສອບດ້ານທັກສະຜ່ານວິດີໂອ ແລະ ຈາກເອກະສານຕ່າງ ໆ ທີ່ກ່ຽວຂ້ອງ.

3. ວິເຄາະເນື້ອໃນ ແລະ ຈຸດປະສົງການຮຽນການສອນ

4. ສ້າງເປັນແບບບັນທຶກການໃຫ້ຄະແນນ ເພື່ອກວດກິດຈະກໍາ 4 ກິດຈະກໍາ ແລ້ວນໍາໄປໃຫ້ຜູ້ຊ່ຽວຊານ 3 ທ່ານໃນການກວດສອບຄວາມທ່ຽງຕົງດ້ານເນື້ອໃນ (Content Validity) ແລະ ດັດສະນີຄວາມສອດຄ່ອງ ເຊິ່ງຄ່າທີ່ຄໍານວນໄດ້ຢູ່ລະຫວ່າງ 0.67 ຫາ 1.00. ຈາກນັ້ນນາໄປທົດລອງກັບກຸ່ມຕົວຢ່າງທີ່ບໍ່ແມ່ນກຸ່ມທີ່ຈະໃຊ້ຈິງ ຈໍານວນ 15 ຄົນ, ຄໍານວນຄ່າດັດສະນຄວາມຍາກງ່າຍຕັ້ງແຕ່ 0.20-0.50. ໄດ້ຄ່າອານາດຈາແນກລະຫວ່າງ 0.20 – 0.85 ແລະ ໄດ້ຄ່າຄວາມເຊື່ອໝັ້ນ KR-20 ເທົ່າກັບ 0.832.

3.2.4 ແບບສັງເກດພຶດຕິກໍາຄວາມໝັ້ນໃຈ

1. ສ້າງເປັນແບບສັງເກດເພື່ອໃຊ້ໃນການປະເມີນພຶດຕິກໍາຄວາມໝັ້ນໃຈໃນການໃຊ້ພາສາອັງກິດຂອງນັກສຶກສາຜ່ານວິທີການນໍາໃຊ້ວິທີການສອນພາສາອັງກິດແບບອີງໃສ່ການປະຕິບັດຕົວຈິງ

2. ສຶກສາເນື້ອໃນຈາກຕໍາລາ ແບບຮຽນ ແລະ ສ້າງເປັນແບບສັງເກດດ້ານພຶດຕິກໍາ ແລະ ຈາກເອກະສານຕ່າງ ໆ ທີ່ກ່ຽວຂ້ອງ.

3. ວິເຄາະເນື້ອໃນ ແລະ ຈຸດປະສົງການຮຽນການສອນ ເຊິ່ງສ້າງເປັນແບບຮູບຣິກ 4 ລະດັບ ໃນ 4 ດ້ານ ໄດ້ແກ່: 1. ການອອກສຽງ (Pronunciation), 2. ຄໍາສັບ (Vocabulary), 3. ໄວຍາກອນ (Grammar) ແລະ 4. ຄວາມຄ່ອງແຄ້ວ (Fluency).

4. ສ້າງເຄື່ອງມືແລ້ວນໍາໄປໃຫ້ຜູ້ຊ່ຽວຊານ 3 ທ່ານໃນການກວດສອບຄວາມທ່ຽງຕົງດ້ານເນື້ອໃນ (Content Validity) ແລະ ດັດສະນີຄວາມສອດຄ່ອງ ເຊິ່ງຄ່າທີ່ຄໍານວນໄດ້ຢູ່ລະຫວ່າງ 0.67 ຫາ 1.00.

*3.2.5 ແບບສອບຖາມຄວາມເພິງພໍໃຈ*

1. ສ້າງເປັນແບບສອບຖາມເພື່ອໃຊ້ໃນການປະເມີນຄວາມເພິງພໍໃຈຂອງນັກສຶກສາຕໍ່ວິທີການນໍາໃຊ້ວິທີການສອນພາສາອັງກິດແບບອີງໃສ່ການປະຕິບັດຕົວຈິງ.

2. ສຶກສາເນື້ອໃນຈາກຕໍາລາ ແບບຮຽນ ແລະ ສ້າງເປັນແບບທົດສອບດ້ານທັກສະຜ່ານວິດີໂອ ແລະ ຈາກເອກະສານຕ່າງ ໆ ທີ່ກ່ຽວຂ້ອງ.

3. ວິເຄາະເນື້ອໃນ ແລະ ຈຸດປະສົງການຮຽນການສອນ ເຊິ່ງສ້າງເປັນແບບປະເມີນຄ່າ 5 ລະດັບ ໃນ 3 ດ້ານ ໄດ້ແກ່: 1. ດ້ານເນື້ອໃນບົດຮຽນ, 2. ດ້ານກິດຈະກໍາການຮຽນການສອນ ແລະ 3. ດ້ານການວັດ ແລະ ປະເມີນຜົນ

4. ສ້າງເຄື່ອງມືແລ້ວນໍາໄປໃຫ້ຜູ້ຊ່ຽວຊານ 3 ທ່ານໃນການກວດສອບຄວາມທ່ຽງຕົງດ້ານເນື້ອໃນ (Content Validity) ແລະ ດັດສະນີຄວາມສອດຄ່ອງ ເຊິ່ງຄ່າທີ່ຄໍານວນໄດ້ຢູ່ລະຫວ່າງ 0.67 ຫາ 1.00. ຈາກນັ້ນນໍາໄປທົດລອງກັບກຸ່ມຕົວຢ່າງທີ່ບໍ່ແມ່ນກຸ່ມທີ່ຈະໃຊ້ຈິງ ຈໍານວນ 15 ຄົນ, ໄດ້ຄ່າຄວາມເຊື່ອໝັ້ນທັງສະບັບດ້ວຍຄ່າສໍາປະສິດອານຟາຄອນບາດ (Cronbach's Alpha) ເທົ່າກັບ 0.930 (Vathanavong et al., 2024).

*3.4 ການວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້ໃນການຄົ້ນຄ້ວາ*

ການວິເຄາະຂໍ້ມູນຄັ້ງນີ້ແມ່ນນໍາໃຊ້ໂປຣແກມຄອມພິວເຕີສໍາເລັດຮູບ SPSS version 20 ເຂົ້າຊ່ວຍໃນການວິເຄາະກ່ຽວກັບຂໍ້ມູນແຕ່ລະພາກ. ການວິເຄາະຂໍ້ມູນ ແມ່ນໄດ້ວິເຄາະຕາມປະເພດຂອງເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ ດັ່ງນີ້:

1) ການວິເຄາະວິດີໂອ, ກຸ່ມຜູ້ຄົ້ນຄວ້າໄດ້ນໍາເອົາວິດີໂອທີ່ບັນທຶກການສາທິດຕົວຈິງຂອງຜູ້ຮຽນເຮັດແຕ່ລະຄັ້ງນັ້ນມາໃຫ້ຜູ້ຊ່ຽວຊານວິເຄາະໃຫ້ຄະແນນຕາມເກນທີ່ກໍານົດໄວ້ ແລ້ວເອົາມາສົມທຽບ, ຈາກນັ້ນຄິດໄລ່ອອກມາເປັນເປີເຊັນ. ວິດີໂອບັນທຶກແຕ່ລະຄັ້ງໄດ້ໝາຍເປັນ ວິດີໂອຄັ້ງທີ່ 1, ວິດີໂອຄັ້ງທີ່ 2, ວິດີໂອຄັ້ງທີ່ 3, ວິດີໂອຄັ້ງທີ່ 4 ແລະ ວິດີໂອຄັ້ງທີ່ 5.

2) ການສັງເກດພຶດຕິກໍາຄວາມໝັ້ນໃຈແມ່ນຈະໄດ້ເອົາວິດີໂອທີ່ຜູ້ຮຽນນັ້ນມາວິເຄາະວ່າ ໃນຂະນະທີ່ປະຕິບັດຕົວຈິງນັ້ນ ຜູ້ຮຽນມີພຶດຕິກໍາແບບໃດແດ່. ໂດຍໃຊ້ເປັນແບບສັງເກດພຶດຕິກໍາ 4 ລະດັບ ໄດ້ແກ່:

| ຄະແນນ | ລະດັບພຶດຕິກໍາຄວາມໝັ້ນໃຈໃນການໃຊ້ພາສາ |
|---|---|
| 4 | ໝາຍເຖິງ ມີພຶດຕິກໍາຄວາມໝັ້ນໃຈໃນການໃຊ້ພາສາ ໃນລະດັບດີຫຼາຍ |
| 3 | ໝາຍເຖິງ ມີພຶດຕິກໍາຄວາມໝັ້ນໃຈໃນການໃຊ້ພາສາ ໃນລະດັບດີ |
| 2 | ໝາຍເຖິງ ມີພຶດຕິກໍາຄວາມໝັ້ນໃຈໃນການໃຊ້ພາສາ ໃນລະດັບພໍໃຊ້ |
| 1 | ໝາຍເຖິງ ມີພຶດຕິກໍາຄວາມໝັ້ນໃຈໃນການໃຊ້ພາສາ ໃນລະດັບຄວນປັບປຸງ |

ແລະນໍາມາປຽບທຽບກັບເກນໃນການແປຄວາມໝາຍ (Erickson-Betz, 2018) ດັ່ງນີ້:

| **ຄະແນນສະເລ່ຍ** | **ລະດັບພຶດຕິກໍາຄວາມໝັ້ນໃຈໃນການໃຊ້ພາສາ** |
|---|---|
| 3.26 – 4.00 | ໝາຍເຖິງ ມີພຶດຕິກໍາຄວາມໝັ້ນໃຈໃນການໃຊ້ພາສາ ໃນລະດັບດີຫຼາຍ |
| 2.51 – 3.25 | ໝາຍເຖິງ ມີພຶດຕິກໍາຄວາມໝັ້ນໃຈໃນການໃຊ້ພາສາ ໃນລະດັບດີ |
| 1.76 – 2.50 | ໝາຍເຖິງ ມີພຶດຕິກໍາຄວາມໝັ້ນໃຈໃນການໃຊ້ພາສາ ໃນລະດັບພໍໃຊ້ |
| 1.00 – 1.75 | ໝາຍເຖິງ ມີພຶດຕິກໍາຄວາມໝັ້ນໃຈໃນການໃຊ້ພາສາ ໃນລະດັບຄວນປັບປຸງ |

3) ການວິເຄາະຫາປະສິດທິພາບຂອງການນໍາໃຊ້ວິທີການສອນພາສາອັງກິດແບບອີງໃສ່ການປະຕິບັດຕົວຈິງ ຕາມເກນ

ປະສິດທິພາບ $\frac{E_1}{E}$ (ພິມພັນ ເດຊະຄຸບ ແລະ ພະເຍົາ ຍິນດີສຸກ, ພສ. 2552) ດັ່ງນີ້:

$$E_1 = \frac{\left[\frac{\sum x}{n}\right]}{A} \times 100$$

ເມື່ອ $E_1$ ໝາຍເຖິງ ຄ່າປະສິດທິພາບຂອງຂະບວນການຮຽນການສອນ.

$\sum x$ ໝາຍເຖິງ ຜົນລວມຂອງຄະແນນກິດຈະກຳລະຫວ່າງການຮຽນການສອນຂອງຜູ້ຮຽນທຸກຄົນລວມກັນ.

$n$ ໝາຍເຖິງ ຈຳນວນນັກສຶກສາທີ່ເຂົ້າຮ່ວມກິດຈະກຳການຮຽນການສອນ

$A$ ໝາຍເຖິງ ຄະແນນເຕັມຂອງກິດຈະກຳໃນລະຫວ່າງການຮຽນ.

$$E_2 = \frac{\left[\frac{\sum F}{n}\right]}{B} \times 100$$

ເມື່ອ $E_1$ ໝາຍເຖິງ ຄ່າປະສິດທິພາບຂອງຜົນໄດ້ຮັບຈາກການຈັດຮຽນການສອນ.

$\sum F$ ໝາຍເຖິງ ຜົນລວມຂອງຄະແນນທີ່ໄດ້ຈາກການທົດສອບຫຼັງຮຽນ

$n$ ໝາຍເຖິງ ຈຳນວນນັກສຶກສາທີ່ເຂົ້າຮ່ວມກິດຈະກຳການຮຽນການສອນ

$B$ ໝາຍເຖິງ ຄະແນນເຕັມຂອງການທົດສອບຫຼັງຮຽນ

3) ແບບສອບຖາມ

ການວິເຄາະຂໍ້ມູນແບບສອບຖາມແມ່ນຈະມີການດຳເນີນວິທີການທາງສະຖິຕິ ເພື່ອໃຊ້ວິເຄາະຂໍ້ມູນໂດຍໃຊ້ໂປແກຼມສຳເລັດຮູບ ແລະ ແບ່ງອອກເປັນ ສອງ ພາກ ດັ່ງນີ້:

**ພາກທີ 1:** ວິເຄາະຄວາມເພິງພໍໃຈຂອງຜູ້ຮຽນ ເພື່ອຫາຄ່າສະເລ່ຍ ແລະ ຄ່າພົນປ່ຽນມາດຕະຖານ (S.D). ສຳລັບເກນການແປຄວາມໝາຍຕາມຫຼັກ Likert Scale ໄດ້ກຳນົດແບບຫວ່າງອອກເປັນ 5 ຫວ່າງ ຕາມເກນການໃຫ້ຄະແນນ (Srisa-at, 2010) ຕາມເກນສຳລັບການຕີຄວາມໝາຍ ໃນການວິເຄາະຂໍ້ມູນດັ່ງນີ້:

| **ຄະແນນ** | **ລະດັບຄວາມເພິງພໍໃຈ** |
|---|---|
| 5 | ໝາຍເຖິງມີຄວາມເພິງພໍໃຈ ຕໍ່ການສອນຢູ່ໃນລະດັບຫຼາຍທີ່ສຸດ |
| 4 | ໝາຍເຖິງມີຄວາມເພິງພໍໃຈ ຕໍ່ການສອນຢູ່ໃນລະດັບຫຼາຍ |
| 3 | ໝາຍເຖິງມີຄວາມເພິງພໍໃຈ ຕໍ່ການສອນຢູ່ໃນລະດັບປານກາງ |
| 2 | ໝາຍເຖິງມີຄວາມເພິງພໍໃຈ ຕໍ່ການສອນຢູ່ໃນລະດັບໜ້ອຍ |
| 1 | ໝາຍເຖິງມີຄວາມເພິງພໍໃຈ ຕໍ່ການສອນຢູ່ໃນລະດັບ ໜ້ອຍທີ່ສຸດ |

ເກນການຕີຄວາມໝາຍໄດ້ກຳນົດດັ່ງນີ້: (Ketchatturat, 2020)

ຄ່າສະເລ່ຍ 4.51-5.00 ໝາຍເຖິງມີຄວາມເພິງພໍໃຈ ຕໍ່ການສອນຢູ່ໃນລະດັບ ຫຼາຍທີ່ສຸດ

ຄ່າສະເລ່ຍ 3.51-4.50 ໝາຍເຖິງມີຄວາມເພິງພໍໃຈ ຕໍ່ການສອນຢູ່ໃນລະດັບ ຫຼາຍ

ຄ່າສະເລ່ຍ 2.51-3.50 ໝາຍເຖິງມີຄວາມເພິງພໍໃຈ ຕໍ່ການສອນຢູ່ໃນລະດັບ ປານກາງ

ຄ່າສະເລ່ຍ 1.51-2.50 ໝາຍເຖິງມີຄວາມເພິງພໍໃຈ ຕໍ່ການສອນຢູ່ໃນລະດັບ ໜ້ອຍ

ຄ່າສະເລ່ຍ 1.00-1.50 ໝາຍເຖິງມີຄວາມເພິງພໍໃຈ ຕໍ່ການສອນຢູ່ໃນລະດັບ ໜ້ອຍທີ່ສຸດ

**ພາກທີ 2:** ເປັນການສັງລວມຂໍ້ມູນຄວາມຄິດເຫັນປັບປຸງເພີ່ມເຕີມທີ່ໄດ້ຈາກຄຳຖາມປາຍເປີດ ແລ້ວນຳມາຈັດເປັນກຸ່ມຄຳ ແລ້ວຂຽນພັນລະນາຄວາມ (Descriptive Analysis). ໂດຍໃຊ້ຄ່າສະຖິຕິພື້ນຖານ, ໄດ້ແກ່: ຄ່າສະເລ່ຍ (Mean), ຄ່າພົນປ່ຽນມາດຕະຖານ (Standard Deviation). ການທົດສອບຄ່າທີ (One sample t-test)

## 4. ຜົນການຄົ້ນຄວ້າ

*4.1 ຜົນການວິເຄາະດ້ານຜົນການຮຽນວິຊາພາສາອັງກິດ*

ຕາຕະລາງທີ່ 1 ຜົນການຮຽນວິຊາພາສາອັງກິດຈາກການນຳໃຊ້ວິທີການສອນແບບການປະຕິບັດຕົວຈິງ

| ວິທີການສອນ | ຈຳນວນຄົນ | ຄະແນນສະເລ່ຍ | ຄ່າຜັນປ່ຽນມັດຕະຖານ | ຄ່າທົດສອບ t | ຄ່າປຽບທຽບ (P-Value) |
|---|---|---|---|---|---|
| ວິທີການສອນແບບການປະຕິບັດຕົວຈິງ | 20 | 8.77 | 0.56 | $10.58^{**}$ | .000 |
| ເກນທົດສອບ (ຄະແນນເຕັມ 10) | 7.00 | | | | |

ຈາກຕາຕະລາງທີ່ 1 ສະແດງໃຫ້ເຫັນຄະແນນຜົນການຮຽນຂອງນັກສຶກສາ ຫຼັງຈາກທີ່ໄດ້ຮຽນດ້ວຍວິທີການສອນແບບການປະຕິບັດຕົວຈິງ ພົບວ່າ ໄດ້ຄ່າສະເລ່ຍຫຼັງຮຽນເທົ່າກັບ 8.77 ຈາກຄະແນນເຕັມ 10. ເມື່ອນຳຄ່າສະຖິຕິໄປທຽບກັບເກນທີ່ກຳນົດຄື 7 ຄະແນນ ໂດຍໃຊ້ສະຖິຕິທົດສອບທີ (T-test) ໄດ້ຄ່າສະຖິຕິທົດສອບ T ເທົ່າກັບ 10.58 ຄ່າ df ເທົ່າກັບ 19 ຄ່າ sig ເທົ່າກັບ 0.00 ຈຶ່ງສະຫຼຸບໄດ້ວ່າ: ຫຼັງຈາກທີ່ໄດ້ຮຽນດ້ວຍວິທີການສອນແບບການປະຕິບັດຕົວຈິງ ສູງກວ່າເກນທີ່ກຳນົດໄວ້ດ້ວຍລະດັບຄວາມສຳຄັນ 0.05. ເມື່ອພິຈາລະນາເພີ່ມເຕີມສະແດງໃຫ້ເຫັນຄະແນນຜົນການຮຽນຂອງນັກສຶກສາ ຫຼັງຈາກທີ່ໄດ້ຮຽນດ້ວຍວິທີການສອນແບບການປະຕິບັດຕົວຈິງ ພົບວ່າ ນັກສຶກສາຈຳນວນ 20 ຄົນ ມີຄະແນນຕັ້ງແຕ່ 7 ຂຶ້ນໄປທັງໝົດ ຄິດເປັນ 100 % ຈຳນວນຜູ້ທີ່ມີຄະແນນຜ່ານເກນດັ່ງຕາຕະລາງທີ່ 2 ລຸ່ມນີ້

ຕາຕະລາງທີ່ 2 ຈຳນວນຄົນຜ່ານເກນຈາກການນຳໃຊ້ວິທີການສອນແບບການປະຕິບັດຕົວຈິງ

| | ຈຳນວນ | ເປີເຊັນ | ໝາຍເຫດ |
|---|---|---|---|
| ຄະແນນຜ່ານເກນ >= 7.00 | 20 | 100 | |
| ຄະແນນບໍ່ຜ່ານເກນ < 7.00 | 0 | 0 | |
| ລວມ | 20 | 100 | |

*4.2 ຜົນການວິເຄາະດ້ານການຫາຄ່າປະສິດທິພາບ*

ຕາຕະລາງທີ່ 3 ຄ່າປະສິດທິພາບຂອງການນຳໃຊ້ວິທີການສອນແບບການປະຕິບັດຕົວຈິງ

| ແບບຝຶກຫັດລະຫວ່າງຮຽນ | | | ແບບທົດສອບຫຼັງຮຽນ | | | ປະສິດທິພາບ $(E_1/E_2)$ |
|---|---|---|---|---|---|---|
| ຄະແນນເຕັມ | ຄະແນນສະເລ່ຍ | $(E_1)$ | ຄະແນນເຕັມ | ຄະແນນສະເລ່ຍ | $(E_2)$ | |
| 40 | 30.88 | 77.21 | 10 | 8.77 | 87.79 | 77.21 / 87.79 |

ຈາກຕາຕະລາງທີ່ 3 ພົບວ່າ ຄະແນນທີ່ໄດ້ຮັບຈາກການດຳເນີນກິດຈະກຳຕະຫຼອດໄລຍະເວລາຮຽນ ຫຼື $E_1$ ມີຄ່າສະເລ່ຍ 77.21 ແລະ ຜົນຄະແນນທີ່ໄດ້ຈາກການສອບຫຼັງຮຽນ ຫຼື $E_2$ ມີຄ່າສະເລ່ຍເທົ່າກັບ 87.79 ເຊິ່ງສູງກວ່າເກນທີ່ກຳນົດໄວ້ຄື 70/70. ສະຫຼຸບໄດ້ວ່າ ການຈັດການຮຽນການສອນໃຊ້ວິທີການສອນແບບອີງໃສ່ການປະຕິບັດຕົວຈິງ ມີປະສິດທະພາບຕາມເກນທີ່ກຳນົດ.

*4.3 ຜົນການວິເຄາະດ້ານພຶດຕິກຳຄວາມໝັ້ນໃຈ.*

ຕາຕະລາງທີ່ 4 ສະແດງເຖິງຜົນການວິເຄາະດ້ານພຶດຕິກຳຄວາມໝັ້ນໃຈ

| ລ/ດ | ເນື້ອໃນການປະເມີນ | $\overline{X}$ | $S.D$ | ລະດັບພຶດຕິກຳ |
|---|---|---|---|---|
| **01** | ການອອກສຽງ (Pronunciation) | 3.58 | 0.50 | ຫຼາຍທີ່ສຸດ |
| **02** | ຄຳສັບ (Vocabulary) | 3.47 | 0.51 | ຫຼາຍທີ່ສຸດ |
| **03** | ໄວຍາກອນ (Grammar) | 3.68 | 0.47 | ຫຼາຍທີ່ສຸດ |
| **04** | ຄວາມຄ່ອງແຄ້ວ (Fluency) | 3.68 | 0.47 | ຫຼາຍທີ່ສຸດ |

| | | | |
|---|---|---|---|
| **ສະເລ່ຍລວມ** | 3.60 | 0.26 | ຫຼາຍທີ່ສຸດ |

ຈາກຕາຕະລາງທີ່ 4 ສະແດງໃຫ້ເຫັນວ່າ: ໂດຍພາບລວມນັກສຶກສາມີຄວາມໝັ້ນໃຈທີ່ສະແດງອອກຜ່ານຂະບວນການຈັດການຮຽນການສອນໃຊ້ວິທີການສອນແບບອີງໃສ່ການປະຕິບັດຕົວຈິງໃນລະດັບຫຼາຍທີ່ສຸດ, ມີຄ່າສະເລ່ຍ $\overline{X} = 3.60$ ແລະ ຄ່າຜັນປ່ຽນມາດຕະຖານ $S.D = 0.26$. ເມື່ອພິຈາລະນາເປັນລາຍດ້ານພົບວ່າ: ດ້ານທີ່ມີຄວາມໝັ້ນໃຈຫຼາຍກວ່າໝູ່ແມ່ນດ້ານໄວຍາກອນ (Grammar) ແລະ ຄວາມຄ່ອງແຄ້ວ (Fluency), ມີຄ່າສະເລ່ຍດ້ານລະ $\overline{X} = 3.68$ ແລະ ຄ່າຜັນປ່ຽນມາດຕະຖານ $S.D = 0.47$. ຮອງລົງມາແມ່ນດ້ານການອອກສຽງ (Pronunciation), ມີຄ່າສະເລ່ຍ $\overline{X} = 3.58$ ແລະ ຄ່າຜັນປ່ຽນມາດຕະຖານ $S.D = 0.50$ ແລະ ດ້ານຄຳສັບ (Vocabulary), ມີຄ່າສະເລ່ຍ $\overline{X} = 3.47$ ແລະ ຄ່າຜັນປ່ຽນມາດຕະຖານ $S.D = 0.51$ ຕາມລຳດັບ.

*4.4 ຜົນການວິເຄາະດ້ານຄວາມເພິ່ງພໍໃຈຂອງນັກສຶກສາ*

ຕາຕະລາງທີ່ 5 ສະແດງຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການຮຽນ-ການສອນວິຊາພາສາອັງກິດ

| ລ/ດ | ເນື້ອໃນການປະເມີນ | $\overline{X}$ | $S.D$ | ລະດັບ ຄວາມເພິ່ງພໍໃຈ |
|---|---|---|---|---|
| **01** | ດ້ານເນື້ອໃນບົດຮຽນ | 4.61 | 0.29 | ຫຼາຍທີ່ສຸດ |
| **02** | ດ້ານກິດຈະກຳການຮຽນການສອນ | 4.38 | 0.38 | ຫຼາຍ |
| **03** | ດ້ານການວັດ ແລະ ປະເມີນຜົນ | 4.66 | 0.40 | ຫຼາຍທີ່ສຸດ |
| **ສະເລ່ຍລວມ** | | 4.55 | 0.25 | ຫຼາຍທີ່ສຸດ |

ຈາກຕາຕະລາງທີ່ 4 ສະແດງໃຫ້ເຫັນວ່າ: ໂດຍພາບລວມນັກສຶກສາມີຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການຮຽນ-ການສອນວິຊາພາສາອັງກິດໂດຍການນຳໃຊ້ວິທີການສອນແບບການປະຕິບັດຕົວຈິງຄັ້ງນີ້ ໃນລະດັບຫຼາຍທີ່ສຸດ, ມີຄ່າສະເລ່ຍ $\overline{X} = 4.55$ ແລະ ຄ່າຜັນປ່ຽນມາດຕະຖານ $S.D = 0.25$. ເມື່ອພິຈາລະນາເປັນລາຍດ້ານພົບວ່າ: ດ້ານທີ່ມີຄວາມເພິ່ງພໍໃຈຫຼາຍທີ່ສຸດກວ່າໝູ່ແມ່ນດ້ານການວັດ ແລະ ປະເມີນຜົນ, ມີຄ່າສະເລ່ຍ $\overline{X} = 4.66$ ແລະ ຄ່າຜັນປ່ຽນມາດຕະຖານ $S.D = 0.40$. ຮອງລົງມາແມ່ນດ້ານເນື້ອໃນບົດຮຽນ, ມີຄ່າສະເລ່ຍ $\overline{X} = 4.61$ ແລະ ຄ່າຜັນປ່ຽນມາດຕະຖານ $S.D = 0.29$ ແລະ ດ້ານກິດຈະກຳການຮຽນການສອນ, ມີຄ່າສະເລ່ຍ $\overline{X} = 4.38$ ແລະ ຄ່າຜັນປ່ຽນມາດຕະຖານ $S.D = 0.38$ ຕາມລຳດັບ.

## 5. ອະພິປາຍຜົນ

ການຈັດກິດຈະກຳການຮຽນການສອນດ້ວຍວິທີການສອນແບບການປະຕິບັດຕົວຈິງໃນຄັ້ງນີ້ ສັງເກດເຫັນວ່າຄະແນນຜົນການຮຽນຂອງນັກສຶກສາ ຫຼັງຈາກທີ່ໄດ້ຮຽນດ້ວຍວິທີການສອນແບບການປະຕິບັດຕົວຈິງ ພົບວ່າ ໄດ້ຄ່າສະເລ່ຍຫຼັງຮຽນເທົ່າກັບ 8.77 ຈາກຄະແນນເຕັມ 10. ເມື່ອນຳຄ່າສະຖິຕິໄປທຽບກັບເກນທີ່ກຳນົດຄື 7 ຄະແນນ ໂດຍໃຊ້ສະຖິຕິທົດສອບທີ (T-test) ໄດ້ຄ່າສະຖິຕິທົດສອບ **T** ເທົ່າກັບ 10.58 ຄ່າ df ເທົ່າກັບ 19 ຄ່າ sig ເທົ່າກັບ 0.00 ຈຶ່ງສະຫຼຸບໄດ້ວ່າ: ຫຼັງຈາກທີ່ໄດ້ຮຽນດ້ວຍວິທີການສອນແບບການປະຕິບັດຕົວຈິງ ສູງກວ່າເກນທີ່ກຳນົດໄວ້ດ້ວຍລະດັບຄວາມສຳຄັນ 0.05 ແລະ ເຮັດໃຫ້ນັກສຶກສາຜ່ານເກນ 100%. ເຊິ່ງນັກສຶກສາມີຄວາມກະຕືລືລົ້ນໃນການຮຽນ ແລະ ເປັນສາເຫດເຮັດໃຫ້ເກີດພຶດຕິກຳຄວາມໝັ້ນໃຈໃນການຮຽນຮູ້ຢູ່ໃນລະດັບຫຼາຍ ພ້ອມທັງສົ່ງຜົນໃຫ້ຜົນການຮຽນຜ່ານເກນທັງໃນຂະບວນການຮຽນ ແລະ ຜົນການທົດສອບທ້າຍພາກຜ່ານເກນ 70/70. ສາເຫດທັງໝົດທີ່ເຮັດໃຫ້ນັກສຶກສາມີຄະແນນສູງຜ່ານເກນ ແລະ ເປັນໄປຕາມຜົນທີ່ກ່າວມາເບື້ອງຕົ້ນນັ້ນ ອາດຈະເປັນຍ້ອນການອອກແບບແຜນການຈັດກິດຈະກຳນີ້ ໝາຍຄວາມວ່າ ວິທີການສອນພາສາອັງກິດແບບອີງໃສ່ການປະຕິບັດຕົວຈິງໃນແຕ່ລະຂັ້ນຕອນຂອງການຮຽນການສອນ ຜູ້ສອນໄດ້ເນັ້ນໃຫ້ນັກສຶກສາໄດ້ມີໂອກາດຝຶກຝົນທັງດ້ານການເວົ້າ ແລະ ການຟັງພາສາອັງກິດ, ເຮັດໃຫ້ນັກສຶກສາກ້າສະແດງອອກ, ອີກຢ່າງໜຶ່ງນັກສຶກສາສາມາດນຳເອົາຄວາມຮູ້ພື້ນຖານຂອງແຕ່ລະຄົນທີ່ມີຢູ່ອອກມາໃຊ້ ແລະ ສະແດງອອກຜ່ານກິດຈະກຳການຮຽນການສອນທີ່ຜູ້ສອນອຳນວຍຄວາມສະດວກໃຫ້ ຈົນເປັນຜົນກໍໃຫ້ເກີດມີຄວາມມັ້ນໃຈຕາມມາ. ພ້ອມດຽວກັນນັ້ນ ເຄື່ອງມືແມ່ນໄດ້ຜ່ານການກວດສອບຄຸນນະພາບຈາກຜູ້ຊ່ຽວຊານເຊິ່ງພົບວ່າມີຄຸນນະພາບ ທັງຄວາມທ່ຽງຕົງດ້ານເນື້ອໃນ, ມີປະສິດທິພາບ ແລະ ສາມາດນຳໄປໃຊ້ໃນການຈັດການຮຽນການສອນຈິງ ແລະ ຄອບຄຸມເນື້ອໃນວິຊາຮຽນຂອງນັກສຶກສາໃນພາກຮຽນນີ້ອີກດ້ວຍ. ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Ooyoung Pyun (2013), Celik (2017), ສີລິນັນ ເຊື້ອໄທສົງ (2017) ແລະ ນັດຖະການ ອິງໄຊຍະພູມ (2020) ທີ່ໄດ້ສຶກສາກ່ຽວຂ້ອງກັບວິທີການສອນພາສາອັງກິດແບບອີງໃສ່ການປະຕິບັດຕົວຈິງ ໂດຍມີຜົນ

ການສຶກສາທີ່ສອດຄ່ອງກັບ ເຊິ່ງຜົນການສຶກສາພົບວ່າ: ວິທີການສອນດັ່ງກ່າວມີຄວາມເໝາະສົມກັບການຮຽນການສອນພາສາອັງກິດ ເພາະການເນັ້ນການປະຕິບັດຈິງນັ້ນເຮັດໃຫ້ນັກສຶກສາໄດ້ມີໂອກາດໃຊ້ພາສາອັງກິດໄດ້ທັງຢູ່ໃນ ແລະ ນອກຫ້ອງຮຽນໄດ້ຢ່າງຄ່ອງແຄ້ວ ແລະ ຖືກຕ້ອງຫຼາຍຂຶ້ນ, ນັກສຶກສາມີທັກສະ ແລະ ຄວາມສາມາດໃນການຮຽນພາສາອັງກິດເພີ່ມຂຶ້ນ ດັ່ງທີ່ຜົນໄດ້ຮັບຂອງການຄົ້ນຄວ້າຄັ້ງນີ້ໃນດ້ານຂະບວນການຮຽນການສອນນັກສຶກສາສາມາດດຳເນີນການໄດ້ຜ່ານປະສິດທິພາບຂອງຂະບວນການໄດ້ຄ່າ 77.21 ແລະ ຜົນໄດ້ຮັບສຸດທ້າຍ 87.79. ປະສິດທິພາບຂອງການຈັດການຮຽນການສອນຢູ່ໃນລະດັບສູງ ຄືຂະບວນການມີປະສິດທິພາບ 77.21 ໃນຂະນະທີ່ຫຼັງຮຽນກໍມີປະສິດທິພາບ 87.79 ເຊິ່ງສູງກວ່າເກນທີ່ກໍານົດໄວ້ (ເກນ 70/70). ດັ່ງນັ້ນ,ຈຶ່ງສະຫຼຸບໄດ້ວ່າການຮຽນ-ການສອນ ໂດຍນໍາໃຊ້ວິທີການສອນແບບການປະຕິບັດຕົວຈິງ (Task-Based Language Teaching) ຫຼື ການເຮັດກິດຈະກໍາທີ່ໃກ້ກັບຄວາມເປັນຈິງ ເພື່ອເນັ້ນໃຫ້ນັກສຶກສາສາມາດນໍາໃຊ້ຄວາມຮູ້ຈາກການຮຽນມານໍາໃຊ້ໃນຊີວິດປະຈໍາວັນ ຫຼືວຽກງານຕົວຈິງ ແມ່ນມີປະສິດທິພາບແທ້ ຖ້າທຽບກັບເກນທີ່ຕັ້ງໄວ້. ນອກຈາກນີ້ຍັງສອດຄ່ອງກັບຜົນການຄົ້ນຄວ້າ Xaykhoun (2025) ທີ່ໄດ້ສຶກສາກ່ຽວກັບ ປະສິດທິພາບແລະປະສິດທິຜົນຂອງບົດສອນກ່ຽວກັບການຮຽນ-ການສອນວິຊາໂຊນແຟໂດຍການນໍາໃຊ້ກິດຈະກໍາການຮຽນຮູ້ແບບຮ່ວມມືເຕັກນິກ TAI ສໍາລັບນັກສຶກສາລະບົບຕໍ່ເນື່ອງລະດັບປະລິນຍາຕີວິທະຍາໄລສິລະປະສຶກສາ ໂດຍມີຈຸດປະສົງເພື່ອ: 1) ສຶກສາຫາປະສິດທິພາບຂອງບົດສອນ ໂດຍການນໍາໃຊ້ກິດຈະກໍາການຮຽນຮູ້ແບບຮ່ວມມືເຕັກນິກ TAI ເຂົ້າໃນການສອນວິຊາໂຊນແຟ ສໍາລັບນັກສຶກສາລະບົບຕໍ່ເນື່ອງລະດັບປະລິນຍາຕີປີທີ 1 ວິທະຍາໄລສິລະປະສຶກສາ ຕາມເກນມາດຕະຖານ 80/80, 2) ສຶກສາຫາປະສິດທິຜົນຂອງການຮຽນຮູ້ໂດຍການນໍາໃຊ້ກິດຈະກໍາການຮຽນຮູ້ແບບຮ່ວມມືເຕັກນິກ TAI ເຂົ້າໃນ ການສອນວິຊາໂຊນແຟ, ກຸ່ມເປົ້າໝາຍທີ່ໃຊ້ໃນການສຶກສາຄັ້ງນີ້ແມ່ນນັກສຶກສາ ລະບົບຕໍ່ເນື່ອງລະດັບປະລິນຍາຕີປີທີ1 ວິທະຍາໄລສິລະ ປະສຶກສາ ປະຈໍາສົກຮຽນ 2022-2023 ຈໍານວນ 29 ຄົນ, ຊຸດການສອນ ຈໍານວນ 3. ຊຸດໄດ້ແກ່ 1. ບົດສອນ 2. ແບບທົດສອບ 3. ເກນ ການປະເມີນ. ຜົນການສຶກສາພົບວ່າ: 1) ປະສິດທິພາບຂອງບົດສອນ ໂດຍການນໍາໃຊ້ກິດຈະກາການຮຽນຮູ້ແບບຮ່ວມມືເຕັກນິກ TAI ເຂົ້າໃນການສອນວິຊາໂຊນແຟ ສໍາລັບນັກສຶກສາລະບົບຕໍ່ເນື່ອງລະດັບປະລິນຍາຕີ ປີທີ 1 ວິທະຍາໄລສິລະປະສຶກສາມີປະສິດທິພາບ ເທົ່າກັບ 82.75/85.18 ສູງກວ່າເກນທີ່ການົດໄວ້ 80/80. 2) ປະສິດທິຜົນຂອງການຮຽນ (ຜົນໄດ້ຮັບ) ໂດຍການນໍາໃຊ້ກິດຈະກໍາການຮຽນຮູ້ແບບຮ່ວມມືເຕັກນິກ TAI ເຂົ້າໃນການສອນວິຊາໂຊນແຟ ສໍາລັບນັກສຶກສາລະບົບຕໍ່ເນື່ອງລະດັບປະລິນຍາຕີປີທີ 1 ວິທະຍາໄລ ສິລະປະສຶກສາ ມີຄ່າດັດຊະນີປະສິດທິຜົນເທົ່າກັບ 0.65 ສະແດງວ່ານັກຮຽນມີຄະແນນເພີ່ມຂຶ້ນເທົ່າກັບ 65.25%. ເຊິ່ງມີຄວາມສໍາຄັນ ທາງສະຖິຕິທີ່ສໍາຄັນ 0.05.

ນອກຈາກນີ້, ວິທີການສອນແບບນີ້ນັກສຶກສາອາດຈະໄດ້ຄົ້ນຄວ້າ ແລະ ຮຽນຮູ້ຢ່າງອິດສະຫຼະໃນແຕ່ລະກິດຈະກໍາທີ່ຜູ້ສອນມອບໃຫ້, ຜູ້ສອນເປັນພຽງຜູ້ແນະນໍາແນວທາງ, ແຕ່ຫຼັກ ໆ ແລ້ວແມ່ນນັກສຶກສາຈະມີສ່ວນຮ່ວມໃນການຮຽນຮູ້ຂ້ອນຂ້າງຫຼາຍ ຈຶ່ງອາດຈະເປັນສາເຫດເຮັດໃຫ້ນັກສຶກສາຮູ້ສຶກຜ່ອນຄາຍອີກສາເຫດໜຶ່ງ ເຊິ່ງເຂົາເຈົ້າບໍ່ຮູ້ສຶກວ່າຖືກບັງຄັບຕ້ອງໃຫ້ປະຕິບັດກິດຈະກໍາຕາມຄໍາສັ່ງ. ນັກສຶກສາສາມາດຄິດ, ຄົ້ນຄວ້າ, ຮຽນຮູ້ດ້ວຍຕົນເອງຈາກຫົວຂໍ້ ຫຼື ວຽກທີ່ຜູ້ສອນກໍານົດໃຫ້ເທົ່ານັ້ນ ອີກທັງກິດຈະກໍາຄ້າຍຄືຕົວຢ່າງທີ່ຜູ້ສອນໄດ້ສາທິດໃຫ້ເບິ່ງ. ຜູ້ສອນເປັນຜູ້ສະໜັບສະໜູນຢູ່ຫ່າງ ໆ, ຄອຍແນະນໍານັກສຶກສາ ໂດຍບໍ່ຈໍາເປັນຕ້ອງແກ້ໄຂຂໍ້ບົກພ່ອງໃນຂະນະທີ່ເຮັດກິດຈະກໍາແຕ່ປະການໃດ ແລະ ນັກສຶກສາຍັງສະທ້ອນຜ່ານແບບສອບຖາມຄວາມເພິ່ງພໍໃຈວ່າສາມາດນໍາໄປໃຊ້ໃນຊີວິດປະຈໍາວັນໄດ້ ແລະ ມີປະໂຫຍດໃນອະນາຄົດອີກດ້ວຍ.

## 6. ສະຫຼຸບຜົນ

ການຈັດກິດຈະກໍາການຮຽນການສອນດ້ວຍວິທີການນໍາໃຊ້ການສອນແບບເນັ້ນການປະຕິບັດຕົວຈິງ (Task-Based Language Teaching) ຫຼື ການເຮັດກິດຈະກໍາທີ່ໃກ້ກັບຄວາມເປັນຈິງ ເພື່ອໃຫ້ນັກສຶກສາສາມາດນໍາໃຊ້ຄວາມຮູ້ຈາກການຮຽນມານໍາໃຊ້ໃນຊີວິດປະຈໍາວັນ ຫຼື ວຽກງານຕົວຈິງ ໃນຄັ້ງນີ້, ສາມາດສະຫຼຸບໄດ້ວ່າ ຜົນການຮຽນຮູ້ຫຼັງການຮຽນ ຂອງນັກສຶກສາສູງກວ່າເກນທີ່ກໍານົດໄວ້ຢ່າງມີນັຍສໍາຄັນທາງສະຖິຕິ ($p < 0.05$) ດ້ວຍຄະແນນສະເລ່ຍ 8.77 ຈາກເກນ 7.00 ແລະນັກສຶກສາຜ່ານເກນ 100% ສະແດງໃຫ້ເຫັນວ່າການນໍາໃຊ້ວິທີການສອນແບບນີ້ຊ່ວຍພັດທະນາຜົນການຮຽນຮູ້ຂອງນັກສຶກສາໃຫ້ດີຂຶ້ນ ແລະເຫັນຜົນຈັບຕ້ອງໄດ້. ປະສິດທິພາບຂອງການຈັດການຮຽນ-ການສອນ ຢູ່ໃນລະດັບສູງ ໂດຍມີຄ່າປະສິດທິພາບກ່ອນຮຽນ 77.21 ແລະ ຫຼັງຮຽນ 87.79 ສູງກວ່າເກນມາດຕະຖານ 70/70 ຢ່າງມີນັຍສໍາຄັນ. ນີ້ອາດເວົ້າໄດ້ວ່າວິທີການສອນແບບການປະຕິບັດຕົວຈິງ ແມ່ນມີປະສິດທິພາບແທ້ໃນການພັດທະນາຜົນການຮຽນຮູ້ ແລະການນໍາໃຊ້ພາສາອັງກິດໃນສະພາບຕົວຈິງ. ພຶດຕິກໍາຄວາມໝັ້ນໃຈຂອງນັກສຶກສາ ພົບວ່ານັກສຶກສາມີຄວາມກ້າຫານ ກະຕືລືລົ້ນ ແລະ ມີສ່ວນຮ່ວມຢ່າງແອກຊິບຜ່ານກິດຈະກໍາການຮຽນທີ່ສອດຄ່ອງກັບສະພາບຕົວຈິງ. ນັກສຶກສາສາມາດສະແດງຄວາມຄິດເຫັນ ແລະໃຊ້ພາສາອັງກິດໄດ້ຢ່າງໝັ້ນໃຈ ເປັນການພັດທະນາທັກສະທັງດ້ານຄວາມຮູ້ ແລະຈິດຕະສໍານຶກໃນການຮຽນຮູ້.

4) ຄວາມເພິ່ງພໍໃຈຂອງນັກສຶກສາ ຕໍ່ການຈັດການຮຽນ-ການສອນດ້ວຍວິທີການສອນແບບການປະຕິບັດຕົວຈິງ ຢູ່ໃນລະດັບສູງ ໂດຍສ່ວນໃຫຍ່ຮູ້ສຶກມີຄວາມສຸກ ເພິ່ງພໍໃຈ ແລະເຫັນວ່າການຮຽນແບບນີ້ຊ່ວຍໃຫ້ເຂົາເຈົ້າມີຄວາມເຂົ້າໃຈແລະສາມາດນໍາໃຊ້ພາສາໄດ້ໃນສະພາບຕົວຈິງ.

ໂດຍສະຫຼຸບແລ້ວ ການນໍາໃຊ້ວິທີການສອນແບບການປະຕິບັດຕົວຈິງ (Task-Based Language Teaching) ໃນການສອນວິຊາພາສາອັງກິດ ມີຜົນຕໍ່ການພັດທະນາຜົນການຮຽນຮູ້

ປະສິດທິພາບການສອນ ພຶດຕິກຳການຮຽນ ແລະຄວາມເພິງພໍໃຈຂອງນັກສຶກສາໄດ້ຢ່າງຊັດເຈນ.

## 7. ຂໍ້ຈຳກັດຂອງການຄົ້ນຄ້ວາ

ໃນການຄົ້ນຄວ້າຄັ້ງນີ້ເປັນການນຳໃຊ້ພຽງແຕ່ 1 ສິກສຶກສາເທົ່ານັ້ນ ແລະ ກຸ່ມຕົວຢ່າງແມ່ນມາຈາກຄະນະດຽວເທົ່ານັ້ນ.

## 8. ຂໍ້ສະເໜີແນະ

ອີງຕາມຜົນການຄົ້ນຄວ້າຄັ້ງນີ້ ມີຂໍແນະນຳບາງດ້ານ ດັ່ງຕໍ່ນີ້:

ຜູ້ສອນຄວນສຸມໃສ່ການເວົ້າໃຫ້ຫຼາຍທີ່ສຸດໃນການສົ່ງເສີມໃຫ້ນັກສຶກສາມີທັກສະການເວົ້າທີ່ດີ ເພື່ອເຮັດໃຫ້ນັກສຶກສາມີຄວາມສະໜຸກສະໜານ ແລະ ມີທັກສະການເວົ້າທີ່ດີຂຶ້ນ.

ຕ້ອງກະກຽມກິດຈະກຳທີ່ສຸມໃສ່ການປະຕິບັດຈິງເພື່ອໃຫ້ນັກສຶກສາໄດ້ປະຕິບັດທີ່ຫຼາກຫຼາຍ ແລະ ຕ້ອງເປັນກິດຈະກຳທີ່ຈະສາມາດຊ່ວຍໃຫ້ນັກສຶກສາໄດ້ຝຶກເວົ້າດ້ວຍຕົນເອງ.

ການກຳນົດເນື້ອໃນບົດຮຽນໃນແຕ່ລະສາຂາວິຊາຕ້ອງສຸມໃສ່ສາຂາວິຊາສະເພາະດ້ານໃນການກຳນົດເນື້ອໃນບົດສອນໃຫ້ລະອຽດ.

ສຳລັບບົດຄົ້ນຄວ້າໃນຕໍ່ໜ້າ ແນະນຳໃຫ້ໃຊ້ວິທີການສອນແບບນີ້ກັບທັກສະອື່ນ ໆ ເຊັ່ນ: ທັກສະການອ່ານ, ການຂຽນ ແລະ ສຶກສາຂໍ້ມູນໃຫ້ເລິກເຊິ່ງ ໂດຍສະເພາະຕ້ອງສຶກສາລະດັບຄວາມສາມາດດ້ານພາສາອັງກິດຂອງນັກສຶກສາສາກ່ອນ ຫຼື ຄວນນຳວິທີການສອນນີ້ໄປທົດລອງກັບວິຊາອື່ນ ເພື່ອນຳມາປຽບທຽບຜົນການຄົ້ນຄວ້າ.

## 9. ເອກະສານອ້າງອີງ


ສີລິນັນ ເຊື້ອໄທສິງ. (2017). *ການຈັດການຮຽນຮູ້ແບບເນັ້ນງານປະຕິບັດ ເພື່ອເສີມສ້າງທັກສະການເວົ້າພາສາອັງກິດສຳລັບນັກສຶກສາຊັ້ນປີທີ່ 1 ມະຫາວິທະຍາໄລສີລະປະກອນ.* ວິທະຍານິພົນສຶກສາສາດມະຫາບັນດິດ ສາຂາວິຊາການສອນພາສາອັງກິດ, ພາກວິຊາຫຼັກສູດ ແລະ ວິທີສອນ, ມະຫາວິທະຍາໄລສີລະປະກອນ.

ນັດຖະການ ອິງໄຊຍະພູມ. (2020). *ການພັດທະນາທັກສະການຟັງ ແລະ ການເວົ້າພາສາອັງກິດໂດຍໃຊ້ກິດຈະກຳການຮຽນຮູ້ແບບນັ້ນພາລະງານ (Task Base Learning Activity) ສຳລັບນັກຮຽນຊັ້ນປະຖົມສຶກສາປີທີ່ 4.* ການຄົ້ນຄວ້າອິດສະລະປະລິນຍາການສຶກສາມະຫາບັນດິດສາຂາຫຼັກສູດ ແລະ ການສອນ, ພາກວິຊາການສຶກສາ ມະຫາວິທະຍາໄລມະເຮສວນ.

ພິມພັນ ເດຊະຄຸບ ແລະ ພະເຍົາ ຍິນດີສຸກ. (2010). *ສ້າງນະວັດຕະກຳການຮຽນຮູ້ດ້ວຍການວິໄຈປະຕິບັດການໃນຫ້ອງຮຽນ*. ກຸງເທບ: ໂຮງພິມແຫ່ງຈຸລະລົງກອນມະຫາວິທະຍາໄລ.

Block, J. (1993). A Framework for Task-based Learning. Essex: Longman.

Celik, B. (2017). Task-Based Learning: An Effective Way of Developing Communication Skills. International Journal of Social Sciences Educational Studies, *4*(2), 104-108.

Ellis, R. (2020). Task-based research and language pedagogy. Language teaching research, *4*(3), 193-220.

Erickson-Betz, E. (2018). Examination of task-based language learning methods on high school students' oral proficiency in French as a foreign language. Doctor of Education, Department Of Curriculum And Instruction, Northern Illinois University.

Ketchatturat, J. (2020). Classroom Research: Knowledge Creation Process for Teaching and Learning Development. Faculty of Education, Khon Kaen University. Thailand. From: https://anyflip.com/frack/uxdt/

Li, S., Ellis, R., & Zhu, Y. (2016). Task-based versus task-supported language instruction: An experimental study. Annual Review of Applied Linguistics, 36, 205-229.

MOE & TDC. (1994). Concept paper: Primary and lower secondary teacher education (ອ້າງຈາກ ກົງສີ ຈຸນລະມານີ 2017). ເອກະສານກອງປະຊຸມໃຫຍ່ຄັ້ງທີ IX ພັກປະຊາຊົນປະຕິວັດລາວ 2011 ໜ້າ 78

Nunan, D. (2001). Task-based Language Teaching. Cambridge: Cambridge University Press.

Nahavandi, N., & Mukundan, J. (2012). Task-based language teaching from the teachers' perspective. International Journal of Applied Linguistics English Literature, *1*(6), 115-121.

Ooyoung Pyun, D. (2013). Attitudes toward task-based language learning: A study of college Korean language learners. Foreign Language Annals, *46*(1), 108-121.

Phanakij, P. & Nillapun, M. (2016). Development of an Instructional Model to Enhance Creative Problem Solving Ability and Scientific Innovation for Primary School Students. Silpakorn Education Journal, 8(2), 192-204. From:https://so05.tcithaijo.org/index.php/suedureasearchjournal/article/download/48755/62150/185815

Pradhan, J. S. (2011). Restructuring teacher education in the 21st century. International Journal of Education & Allied Sciences, *3*(2), 17-20.

Souriyavongsa, T., Rany, S., Abidin, M. J. Z., & Mei, L. L. (2013). Factors causing students low English language learning: A case study in the National University of Laos. International Journal of English Language Education, *1*(1), 179-192.

Srisa-at, B. (2010). Research Methodology (8th ed.). Bangkok: Suviriyasan Co., Ltd

Vathanavong, P., Vathanavong, T., Sanrattana, U., & Yuankrathok, P. (2021). The Curriculum Development of Enhancing Research in Classroom Competence through Eclassnet for Teacher Training Student at Faculty of Education, Souphanouvong University. Souphanouvong Journal of Multidisciplinary Research and Development. *7*(1), 79 - 92. From http://www.su-journal.com/browse_article/view_journal.php?art_id=172

Xaykhoun , S. (2025). Efficiency and Effectiveness of Solfege Subject by Using Teams Assisted Individualization (TAI) Technique Activities for Undergraduate Continuous Student,Art Education Collage. Journal of Science and Teacher Education, *1*(1), 41-49. https://doi.org/10.5555/d20vsn93.

Xaypanya, V., Ismail, S. A. M. M., & Low, H. M. (2017). Demotivation experienced by English as Foreign Language (EFL) learners in the Lao PDR. The Asia-Pacific Education Researcher, *26*(6), 361-368.

Yagang, D. (1993). Doing Tasks-base teaching. Oxford: Oxford University Press.